LAND INFORMATION LEARNING CENTER
ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ

**ຮ່າງແຜນກິດຈະກຳ**

**ງານວາງສະແດງແລກປ່ຽນຂໍ້ມູນຂ່າວສານກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ**

1. ຄວາມເປັນມາ

ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ (LILC) ແມ່ນເກີດຈາກ ສູນຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ເຊິ່ງມີຫ້ອງການຕັ້ງຢູ່ ອົງການບ້ານຈຸດສຸມສາກົນ (VFI) ມາໄດ້ 9 ປີ ແລະ ໄດ້ສະໜອງຂໍ້ມູນຂ່າວສານກ່ຽວກັບທີ່ດິນ ເພື່ອໃຫ້ທຸກພາກສ່ວນສາມາດເຂົ້າເຖິງໄດ້.

ສູນຂ່າວສານເພື່ອການຮຽນຮູ້ ແລະ ແລກປ່ຽນກ່ຽວກັບທີ່ດິນ ເປັນສູນຮຸ່ນຕໍ່ຂອງ ສູນຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພາຍໃຕ້ການຮ່ວມມືຂອງ ກຸ່ມແລກປ່ຽນຂໍ້ມູນເລື່ອງທີ່ດິນ (LIWG) ແລະ ອົງການບ້ານຈຸດສຸມສາກົນ (VFI) ເຊິ່ງເນັ້ນໜັກໃສ່ການຮ່ວມມືລະຫວ່າງ ອົງການຈັດຕັ້ງ, ລັດ ແລະ ບຸກຄົນຕ່າງໆ ໃນການເຮັດວຽກກ່ຽວກັບບັນຫາທີ່ດິນ, ແລກປ່ຽນຂໍ້ມູນຂ່າວສານ ແລະ ຄວາມຮູ້, ແລະ ຊຸກຍູ້ການປຶກສາຫາລື ກ່ຽວກັບທີ່ດິນໃນ ສປປລາວ.

ຕາມສະພາບການໃນປັດຈຸບັນໂດຍອີງບົດຄົ້ນຄວ້າ**ຄວາມຄາດຫວັງ ແລະ ເປົ້າໝາຍ ໃນຊີວິດຂອງໄວໜຸ່ມລາວ** ຂອງອົງການຮ່ວມມືລາວ-ເຢຍລະມັນ ໃນປີ 2016-2017 ໄວໜຸ່ມລາວສ່ວນໃຫຍ່ໄດ້ໃຊ້ເວລາວ່າງ ໃນ ການພົບປະກັບໝູ່ເພື່ອນ ແລະ ໄປຫຼິ້ນຂ້າງນອກ (60%) ແລະ ຫຼິ້ນກິລາ (58%). ເມື່ອເບິ່ງການນຳໃຊ້ສື່ສ່ວນໃຫຍ່ (84%) ເບິ່ງໂທລະພາບ, ແລະ ເກີນເຄິ່ງໜຶ່ງ (55%) ນຳໃຊ້ໂທລະສັບມືຖືແບບທັນສະໄໝ/ອິນເຕີເນັດ/ສື່ທາງສັງຄົມ. ຢ່າງໃດກໍດີ, ມີໄວໜຸ່ມຈຳນວນ ຂ້ອນຂ້າງໜ້ອຍ ທີ່ອ່ານວາລະສານ (17%) ແລະ ອ່ານໜັງສືພິມ (4%).

ໄວໜຸ່ມລາວແມ່ນຍັງມີຄວາມຈຳກັດທາງດ້ານໂອກາດໃນການພັດທະນາເລື່ອງທັກສະຊີວິດ ຫຼື ປະສົບການຕ່າງທີ່ສຳຄັນໂດຍສະເພາະແລ້ວແມ່ນການສະແດງອອກໃນເວທີສຳຄັນຕ່າງໆເຊິ່ງ**ງານວາງສະແດງແລກປ່ຽນຂໍ້ມູນຂ່າວສານກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ** ແມ່ນໄດ້ສຸມໃສ່ໃຫ້ທຸກພາກສ່ວນໄດ້ເຂົ້າເຖິງຂໍ້ມູນຂ່າວສານທາງດ້ານທີ່ດິນ, ກະສິກຳ ແລະ ຊັບພະຍາກ່ອນທຳມະຊາດໂດຍສະເພາະແມ່ນເປີດໂອກາດໃນການແລກປ່ຽນໃຫ້ແກ່ໄວໜຸ່ມສູ່ໄວໜຸ່ມ

2. **ຈຸດປະສົງ**
    - ເພື່ອສົ່ງເສີໃຫ້ໄວໜຸ່ມ ແລະ ຊຸມຊົນມີໂອກາດໃນການແລກປ່ຽນປະສົບການໃນເວທີສຳຄັນ
    - ເພື່ອແລກປ່ຽນການຈັດຕັ້ງປະຕິພັດໃນການພັດທະນາວຽກງານກະສິກຳ, ທີ່ດິນ ແລະ ຊັບພະຍາກອນທຳມະຊາດ
3. ຫົວຂໍ້ການສົນທະນາ
    - **ໄວໜຸ່ມກະສິກຳ**
    - **ການອານຸລັກປ່າຊຸມຊົນ**
    - **ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບທີ່ດິນ, ກະສິກຳ, ຊັບພະຍາກອນທຳມະຊາດ (ຕາມບູດທີ່ວ່າງສະແດງ)**

4. ຫຼັກສະນະຂອງງານ

- **ແລກປ່ຽນຂໍ້ມູນຂ່າວສານໂດຍຜ່ານການວາງສະແດງບູດ**
  ການວ່າງສະແດງບູດແມ່ນຈະເຊີນບັນດາຄູ່ຮ່ວມພັດທະນາທັງພາກລັດ ແລະ ອົງການຈັດຕັ້ງທາງສັງຄົມມາຕັ້ງບູດໃນຫົວຂໍ້ທີ່ແຕກຕ່າງກັນເຊັ່ນ: ການສຶກສາ, ສາທາ(ສຸກຂະພາບ), ກະສິກຳ, ທີ່ດິນ ແລະ ສື່.(ສຳລັບບູດແມ່ນຈະເຊີນປະມານ 20 ອົງກອນ) ໃນແຕ່ລະບູດຈະມີການບັນຍາຍກ່ຽວກັບວຽກງານຂອງຕົນໂດຍຜູ້ເຂົ້າຮ່ວມສາມາດເຂົ້າໄປຮັບຟັງຕາມຫົວຂໍ້ທີ່ຕົວເອງສົນໃຈ
- **ເວທີສົນທະນາແລກປ່ຽນ**
  ການແລກປ່ຽນແມ່ນຈະເຊີນໄວໜຸ່ມທີ່ມີປະສົບການທາງດ້ານກະສິກຳມາແລກປ່ຽນຄວາມຮູ້ ແລະ ເປັນຫຍັງຈຶ່ງສາມາດເຮັດສ່ວນກະສິກຳຂະໜາດນ້ອຍເປັນທຸລະກິດຄອບຄົວໄດ້ ແລະ ການແລກປ່ຽນກ່ຽວກັບແມ່ນຍັງມີການ ແລກປ່ຽນກ່ຽວກັບຊີວິດແມ່ຍິງໃນເຂດຊົນນະບົດ ແລະ ການມີສ່ວນຮ່ວມຂອງຊຸມຊົນໃນການພັດທະນາ
- **ກິດຈະກຳສ້າງສັນ**
  ກິດຈະກຳສ້າງສັນແມ່ນພວກເຮົາມີອາສາສະໝັກປະຈຳສູນເຊິ່ງກິດຈະກຳສ້າງສັນແມ່ນການສະແດງລະຄອນ, ຫຼິ້ນເກມ ແລະ ສົນລະປະດົນຕີຕ່າງໆໂດຍຈະສະແດງ ແລະ ນຳພາໂດຍອາສາສະໝັກຂອງສູນ

**5. ຜົນຄາດວ່າຈະໄດ້ຮັບ**

- ຜູ້ເຂົ້າຮ່ວມປະມານ 150-300 ຄົນຮັບຮູ້ກ່ຽວກັບຂໍ້ມູນຂ່າວສານທາງດ້ານທີ່ດິນ, ກະສິກຳ ແລະ ຊັບພະຍາກອນທຳມະຊາດ
- ໄວໜຸ່ມມີຄວາມສົນໃຈໃນວຽກງານກະສິກຫຼາຍຂຶ້ນ.
- ບັນອົງການຈັດຕັ້ງທຸກພາກສ່ວນມີຄວາມສາມັກຄີ ແລະ ມີການຮ່ວມກັນຢ່າງດີໃນອານາຄົດຕໍ່ໄປ

6. **ວິທີການ ແລະ ຂະບວນການ**

- ກະກຽມເນື້ອໃນແຜນງານກັບທີມງານ ແລະ ພາກສ່ວນທີ່ກ່ຽວຂ້ອງ
- ປະສານຫາຄູ່ຮ່ວມງານ ແລະ ອົງການທີ່ກ່ຽວຂ້ອງ
- ປະສານຫາສະຖານທີຈັດງານ
- ເຊີນບັນດາພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ
- ຈັດຕັ້ງປະຕິບັດງານ
- ຂຽດລາຍງານກິດຈະກຳ

7. **ຜູ້ເຂົ້າຮ່ວມ** (ລວມທັງໝົດປະມານ 300 ຄົນ)

- ກະຊວງທີ່ກ່ຽວຂ້ອງ
- ອົງການຈັດຕັ້ງທາງສັງຄົມ ແລະ ສາກົນ
- ນັກຮຽນນັກສຶກສາ ແລະ ບຸກຄົນທົ່ວໄປ

8. **ເວລາ ແລະ ສະຖານທີ່**

- ສະຖານທີ່: ວິທະຍາໄລເຕັກນິກສັບພະວິຊາ
- ວັນທີ 15 ກັນຍາ 2018

**ໝາຍເຫດ:**ແຜນອາດມີການປ່ຽນແປງອີງຕາມຄວາມເໝາະສົມ ແລະ ເຫັນຈາກຄະນະຈັດງານ